ສະບັບຕົ້ນ

ແຂວງຫຼວງນ້ຳທາ
ພະແນກຍຸຕິທຳ
ເລກທີ 1324 /ຊທສ ລົງວັນທີ 10/10/19
ຍັ້ງຢືນ. ສົມຫາ ອ່ອນມີ
ຄ່າທຳນຽມ 20 000 ກີບ
(ຂຽນເປັນຕົວໜັງສື)
ຄ່າບໍລິການ 45,000 ກີບ
(ຂຽນເປັນຕົວໜັງສື)
ຂະແໜງທະບຽນສານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ສັນຍາຮ່ວມມື

## ວ່າດ້ວຍການຄົ້ນຄວ້າ ແລະ ພັດທະນາ ເຕັກນິກການຜະລິດກະສິກຳ (ພືດຜັກ, ເຂົ້າ ແລະ ໄມ້ກິນ ໝາກ)

**ສັນຍາສະບັບນີ້ໄດ້ສ້າງຂຶ້ນ ແລະ ລົງນາມ ທີ່ສູນຄົ້ນຄວ້າກະສິກຳ ແຂວງຫລວງນ້ຳທາ**
**ວັນທີ29 ສິງຫາ 2019**

**ລະຫວ່າງ**

**ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາງໜ້າໂດຍ ສູນຄົ້ນຄວ້າກະສິກຳ ຫລວງນ້ຳທາ.ສຳນັກງານຕັ້ງຢູ່ບ້ານຫລວງ ເມືອງຫລວງນ້ຳທາ ແຂວງຫລວງນ້ຳທາ ເບີໂທ/ແຟກ 086211039 ຕໍ່ໄປນີ້ເອີ້ນວ່າ: “ ຝ່າຍ ກ”**

**ແລະ**

**ກຸ່ມບໍລິສັດສົມອນພັດທະນາກະສິກຳ ແລະ ບໍລິການຂາເຂົ້າ-ຂາອອກ ຈຳກັດຜູ້ດຽວຕັ້ງຢູ່ ບ້ານວຽງຄຳ ເມືອງຫລວງນ້ຳທາ ແຂວງຫລວງນ້ຳທາ ໂທ: 02096388868 ຕໍ່ໄປນີ້ເອີ້ນວ່າ “ ຝ່າຍ ຂ”**

**ມາດຕາ 1 :** ຈຸດປະສົງ.

ສັນຍາສະບັບນີ້ສ້າງຂຶ້ນ ແລະ ໄດ້ຮັບການຕົກລົງເຫັນດີຮ່ວມກັນໃນການຄົ້ນຄວ້າ ແລະ ພັດທະນາເຕັກນິກການຜະລິດກະສິກຳ, ກະສິກຳສະອາດ (ພືດຜັກ, ເຂົ້າ ແລະ ໄມ້ກິນໝາກ), ຊຶ່ງບໍ່ແມ່ນການດຳເນີນກິດຈະການເຊົ່າ ຫຼື ສຳປະທານ, ໂດຍທັງສອງຝ່າຍມີໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ດ ໝາຍເທົ່າທຽມກັນ, ບົນພື້ນຖານການມີປະໂຫຍດຮ່ວມກັນຢ່າງຍຸດຕິທຳ ເພື່ອຍົກລະດັບການຜະລິດ ໃຫ້ສົມຄູ່ກັບຄວາມອາດສາມາດ ແລະ ທ່າແຮງຂອງພື້ນຖານວັດຖຸເຕັກນິກທີ່ມີໃນປັດຈຸບັນ

**ມາດຕາ 2 : ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄູ່ສັນຍາ.**

**ກ. “ ຝ່າຍ ກ ”**

- ປະກອບສ່ວນພື້ນທີ່ຈຳນວນ 3,000ຕາແມັດ(ສາມພັນຕາແມັດ) ເພື່ອສ້າງເຮືອນຮົ່ມ ຈຳນວນ 06 ຫຼັງ, ຂະໜາດ 9x32ແມັດຕໍ່ຫລັງ ແລະອີກຈຳນວນນຶ່ງເພື່ອກໍ່ສ້າງຮ້ານຈຳໜ່າຍເຄື່ອງມື,ອຸປະກອນແລະແນວພັນພືດຕ່າງໆ 01 ຮ້ານ ຂະໜາດ 6x8 ແມັດ.
- ເອື້ອອຳນວຍໃຫ້ແກ່ການນຳໃຊ້ພື້ນຖານວັດຖຸເຕັກນິກຂອງສູນເຊັ່ນ: ຫ້ອງການ, ສາງເຄື່ອງ ແລະ ອື່ນໆ.
- ແຕ່ງຕັ້ງນັກວິຊາການ ແລະ ນັກຄົ້ນຄວ້າເຂົ້າຮ່ວມຕາມໜ້າວຽກຕົວຈິງ.
- ຜະລິດແນວພັນເຂົ້າບໍລິສຸດ ແລະແນວພັນລຸ້ນ1ໃນເນື້ອທີ່ 3,2 ເຮັກຕາ, ສ່ວນແນວພັນລຸ້ນ 2 ແລະ ລຸ້ນ3 ແມ່ນຜະລິດກັບກຸ່ມຊາວນາ ໃນເນື້ອທີ່ບໍ່ຫລຸດ 15 ເຮັກຕາ.
- ເປັນເຈົ້າການໃນການປະຕິບັດດ້ານວິຊາການຄົ້ນຄວ້າ ແລະ ພັດທະນາກະສິກຳຮ່ວມກັບຝ່າຍ “ຂ“
- ເຜີຍແຜ່ຜົນໄດ້ຮັບຈາກການຄົ້ນຄວ້າຮ່ວມກັບຝ່າຍ “ຂ“ ອອກສູ່ສັງຄົມ (ແນວພັນ ແລະ ເຕັກນິກກະສິກຳສະອາດ)
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ:ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ກົມປູກຝັງທີ່ຮັບຜິດຊອບກ່ຽວກັບ ແນວທາງກະສິກຳສະອາດ

- ອຳນວຍຄວາມສະດວກໃນການປະກອບເອກະສານນຳເຂົ້າ, ສົ່ງອອກປັດໃຈຂາເຂົ້າກະສິກຳທີ່ກ່ຽວຂ້ອງ ແລະ ຕິດພັນໂດຍກົງກັບການປະຕິບັດສັນຍາ.
- ນຳເອົາສັນຍາສະບັບນີ້ໄປຢັ້ງຢືນນຳຂະແໜງທະບຽນສານແຂວງ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ.
- ເຂົ້າຮ່ວມການວາງແຜນວຽກຮ່ວມກັບຝ່າຍ "ຂ" ແລະ ສະຫຼຸບລາຍງານຜົນໄດ້ຮັບຈາກການຮ່ວມມືໃຫ້ແກ່ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີຢ່າງເປັນປົກກະຕິ.
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ແລະ ສອງຝ່າຍຕົກລົງເຫັນດີນຳກັນ.

ຂ. "ຝ່າຍ ຂ"

- ສະໜອງທຶນເພື່ອກໍ່ສ້າງເຮືອນຮົ່ມ ເພື່ອຜະລິດພືດຜັກສະອາດ ຈຳນວນ 6 ຫຼັງ, 9x32 ແມັດ.
- ກໍ່ສ້າງຮ້ານຈຳໜ່າຍເຄື່ອງມື ແລະ ແນວພັນຕ່າງໆ 01 ຮ້ານ ຂະໜາດ 6x8 ແມັດ, ຮ້ານວາງສະແດງ ແລະ ຈຳໜ່າຍຜົນຜະລິດ 01 ຫຼັງ ຂະໜາດ 9x10 ແມັດ.
- ຮ່ວມກັບຝ່າຍ "ກ" ຜະລິດແນວພັນເຂົ້າບໍລິສຸດ ແລະ ແນວພັນເຂົ້າລຸ້ນ1ໃນເນື້ອທີ່ 3,2 ເຮັກຕາ ສ່ວນແນວພັນເຂົ້າລຸ້ນ2 ແລະ ລຸ້ນ3 ແມ່ນຜະລິດກັບກຸ່ມຊາວນາ ໃນເນື້ອທີ່ບໍ່ຫຼຸດ 15 ເຮັກຕາ.
- ສະໜອງວິຊາການ ແລະ ນັກຄົ້ນຄ້ວາເຂົ້າຮ່ວມຕາມຄວາມເໝາະສົມ.
- ຮັບຜິດຊອບການຕະຫຼາດເພື່ອຈຳໜ່າຍຜະລິດຕະພັນ.
- ອຳນວຍຄວາມສະດວກໃນການຢັ້ງຢືນມາດຕະຖານ ແລະ ຄຸນນະພາບແນວພັນ.
- ຮັບຜິດຊອບຈ່າຍຄ່າທຳນຽມ, ຄ່າບໍລິການ, ພັນທະອື່ນໆ.
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ແລະ ສອງຝ່າຍຕົກລົງເຫັນດີນຳກັນ.
- ບໍ່ສາມາດນຳເອົາເຄື່ອງມື, ອຸປະກອນ ຫຼື ຜົນຜະລິດອື່ນ ທີ່ບໍ່ແມ່ນຜົນໄດ້ມາຈາກການຮ່ວມມືກັນເຂົ້າມາຈຳໜ່າຍ.
- ເຂົ້າຮ່ວມການວາງແຜນວຽກ ແລະ ສະຫຼຸບ ລາຍງານຜົນໄດ້ຮັບຈາກການຮ່ວມມືກັບ ຝ່າຍ "ກ"

ມາດຕາ 3: ການແບ່ງປັນຜົນປະໂຫຍດ.

- ພາຍຫຼັງທີ່ສະຫຼຸບລາຍຮັບ - ລາຍຈ່າຍ ປະຈຳປີກ່ອນວັນທີ 20 ທັນວາ ຂອງແຕ່ລະປີ ທີ່ຖືກຮັບຮອງຈາກຫົວໜ້າຂອງທັງສອງຝ່າຍແມ່ນເຫັນດີແບ່ງປັນ ເປັນເງິນສົດ ຄືດັ່ງນີ້:
  1. ສູນຄົ້ນຄ້ວາກະສິກຳຫຼວງນ້ຳທາ 40% ຂອງກຳໄລສຸດທິ.
  2. ກຸ່ມບໍລິສັດສີມອນ 60% ຂອງກຳໄລ່ສຸດທິ.

ມາດຕາ 4: ການປ່ຽນແປງ ຫຼື ຍົກເລີກສັນສັນ.

ສັນຍາສະບັບນີ້ອາດຈະມີການປ່ຽນແປງ ຫຼື ຍົກເລີກບົນພື້ນຖານການເຫັນດີທັງສອງຝ່າຍ, ດັ່ງລຸ່ມນີ້:

1. ກໍລະນີປ່ຽນແປງແມ່ນຍົກລະດັບຂີດຄວາມສາມາດໃນການຮ່ວມມື ຫຼື ຫຼຸດໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຝ່າຍທີ່ກຳນົດໄວ້ໃນມາດຕາ2 ຂອງສັນຍາສະບັບນີ້.
2. ກໍລະນີການຍົກເລີກ:

- ຄູ່ສັນຍາມີຄວາມສະໝັກໃຈຍົກເລີກກ່ອນກຳນົດ.
- ຝ່າຍ ຂ ຖືກລົ້ມລະລາຍ ຕາມກົດໝາຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການລົ້ມລະລາຍ ຂອງ ສປປ ລາວ.
- ຝ່າຍໃດຝ່າຍໜຶ່ງມີການລະເມີດລະບຽບກົດໝາຍ ຫຼື ສັນຍາສະບັບນີ້ຂັ້ນຮ້າຍແຮງ.
- ຂໍເລີກສັນຍາ.

ມາດຕາ 5 : ກຳນົດເວລາ ແລະ ສິ້ນສຸດສັນຍາ.

- ສັນຍາສະບັບນີ້ມີອາຍຸການນຳໃຊ້ພາຍໃນກຳນົດ 5 ປີ (ຫ້າປີ) ນັບແຕ່ວັນເຊັນຮ່ວມກັນເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ຄັ້ງລະ 1 ປີ (ນຶ່ງປີ), ແຕ່ລະປີທັງສອງຕ້ອງຮ່ວມກັນຕີລາຄາໝາກຜົນໄດ້ຮັບຂອງໂຄງການຮ່ວມມື

ບົນພື້ນຖານການເຫັນດີຂອງທັງສອງຝ່າຍຈຶ່ງສາມາດຕໍ່ສັນຍາໄດ້. ກິດຈະການຮ່ວມມືຈະຕົກເປັນກຳມະສິດຂອງ " ຝ່າຍ ກ " " ຝ່າຍ ກ "ຈະໃຫ້ບູລິມະສິດແກ່ຝ່າຍ ຂ ກ່ອນໃນການສືບຕໍ່ການຮ່ວມມື. ຖ້າຝ່າຍ ຂ ມີຄວາມສົນໃຈ ຢາກສືບຕໍ່ການຮ່ວມມືຕ້ອງສະເໜີເຈດຈຳນົງຂອງຕົນຢ່າງເປັນລາຍລັກອັກສອນກ່ອນວັນສິ້ນສຸດຂອງສັນຍາຢ່າງໜ້ອຍ 1 ປີ (ໜຶ່ງປີ) ແລະ ຝ່າຍ ກ ຈະປຶກສາຫາຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ຝ່າຍ ຂ ເປັນຜູ້ສະເໜີມາໃໝ່.

ສັນຍາສະບັບນີ້ຈະສິ້ນສຸດລົງກໍ່ຕໍ່ເມື່ອ:

- ສັນຍາໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.
- ຄູ່ສັນຍາໄດ້ມີການຕົກລົງກັນຢ່າງເປັນລາຍລັກອັກສອນ.
- ຝ່າຍ ຂ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ ຫຼື ຖືກລົ້ມລະລາຍຕາມກົດໝາຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການລົ້ມລະລາຍຂອງ ສປປ ລາວ.
- ຝ່າຍ "ຂ" ບໍ່ສາມາດປະຕິບັດຕາມຫນ້າທີ່ ແລະຄວາມຮັບຜິດຊອບທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງສັນຍາສະບັບນີ້

**ມາດຕາ 6 :ການແກ້ໄຂຂໍ້ຂັດແຍ່ງ.**

ຖ້າມີຂໍ້ຂັດແຍ່ງໃດໜຶ່ງເກີດຂຶ້ນຈາກການປະຕິບັດສັນຍາສະບັບນີ້ກ່ອນອື່ນໝົດຕ້ອງແກ້ໄຂດ້ວຍສັນຕິວິທີດ້ວຍການເຈລະຈາ ແລະ ປຶກສາຫາລືຮ່ວມກັນບົນພື້ນຖານຕົກລົງເຫັນດີເປັນເອກະພາບຂອງທັງສອງຝ່າຍ.

ໃນກໍລະນີທີ່ຂໍ້ຂັດແຍ່ງດັ່ງກ່າວຫາກບໍ່ສາມາດຕົກລົງກັນໄດ້, ດັ່ງກ່າວຈະຖືກແກ້ໄຂຕາມລະບຽບກົດຫມາຍຂອງ ສປປ ລາວ.

**ມາດຕາ 7 : ບົດບັນຍັດສຸດທ້າຍ**

ສັນຍາຮ່ວມມືສະບັບນີ້ ໄດ້ສ້າງຂຶ້ນເປັນ 03 ສະບັບຕົ້ນ, ປະກອບດ້ວຍ 7 ມາດຕາ ແລະ ມີ 3 ໜ້າ, ຊຶ່ງ ມີຄຸນຄ່າເທົ່າກັນ ແລະ ມີຜົນບັງຄັບໃຊ້ນັບແຕ່ມື້ທີ່ທັງສອງຝ່າຍໄດ້ລົງລາຍເຊັນຮ່ວມກັນເປັນຕົ້ນໄປ.

| ຕາງຫນ້າສູນຄົ້ນຄວ້າກະສິກຳຫລວງນ້ຳທາ | ຕາງຫນ້າກຸ່ມບໍລິສັດສີມອນພັດທະນາກະສິກຳ ແລະ ບໍລິການຂາເຂົ້າ - ຂາອອກຈຳກັດ. |
|---|---|
| ປະດິດ ຈັນທະນຸວົງ | ນາງ ສີມອນ ແກ້ວວົງເພັດ |

Simone Agriculture Development and Import-Export Service Group

**ຮັບຮູ້ຈາກ**

**ຫົວຫນ້າສະຖາບັນຄົ້ນຄວ້າກະສິກຳ-ປ່າໄມ້ ແລະພັດທະນາຊົນນະບົດ**

ປອ ໄຊສົງຄາມ ພົມມະສອນ